ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ — ເລກທີ 312 /ອຄ.ກອກ.

ກົມອຸດສາຫະກຳ — ນະຄອນຫລວງວຽງຈັນ, ວັນທີ 11 ພຶດສະພາ 2009

# ບົດແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍ
## ມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ 3/4/09

**ເຖິງ:** ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/ສພຊ, ລົງວັນທີ່ 3/4/99.
- ອີງຕາມຂອງຄຳສັ່ງນາຍົກລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ່ 22/9/08.
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ແລະ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ່ 3/4/09.

ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳ ປຸງແຕ່ງໄມ້ ເລກທີ 0719/ອຄ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ໂດຍຖືກຕ້ອງຕາມທິດຂອງລັດຖະບານ. ກົມອຸດສາຫະກຳ ອອກບົດແນະນຳ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ປະຕິບັດ ຄືດັ່ງນີ້:

**1/.** ໃຫ້ນຳໃຊ້ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ່ 3/4/09 ປ່ຽນແທນຂໍ້ຕົກລົງ ເລກທີ 0221/ອຄ, ລົງວັນທີ່ 13/2/07. ຂໍ້ຕົກລົງສະບັບໃໝ່ນີ້ ມີຈຸດປະສົງເພື່ອຄຸ້ມຄອງ ແລະ ດັດສົມ ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ລວມທັງໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ ແບບຄອບຄົວ ແລະ ໂຮງຊ່າງຫັດຖະກຳ.

**2/.** ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ຂໍ້ຕົກລົງເລກທີ 0719/ອຄ ຢ່າງກວ້າງຂວາງ, ລວມທັງພາກລັດ ແລະ ພາກທຸລະກິດ, ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ໄດ້ອອກໃບອະນຸຍາດດຳເນີນກິດຈະການໃຫ້ແລ້ວ ແລະ ໂຮງງານກຳລັງປັບປຸງ ໃຫ້ເຂົ້າໃຈແຈ້ງ ແລະ ປະຕິບັດຕາມຢ່າງເຂັ້ມງວດ.

**3/.** ໃຫ້ສັງລວມ ແລະ ຈັດແບ່ງຂັ້ນໂຮງງານອຸດສາຫະກຳປຸງແຕ່ງໄມ້ຄືນໃໝ່ ຕາມມາດຕາ 4 ຂອງຂໍ້ຕົກລົງເລກທີ 0719/ອຄ, ຊຶ່ງໄດ້ກຳນົດໂຮງງານເປັນສອງຂັ້ນ ຄື:

- ຂັ້ນ I: ໂຮງງານເລື່ອຍໄມ້ ແລະ ໂຮງງານປຸງແຕ່ງໄມ້ເຄິ່ງສຳເລັດຮູບ.
- ຂັ້ນ II: ໂຮງງານປຸງແຕ່ງໄມ້ສຳເລັດຮູບ ແລະ ໂຮງງານເຟີນີເຈີ.

- ສຳລັບໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ (ແບບຄອບຄົວ) ກໍ່ຈັດເຂົ້າເປັນຂັ້ນ II, ແຕ່ໃຫ້ສັງລວມ ແລະ ຈັດເຂົ້າໃນຕາຕະລາງສະເພາະຂະໜາດນ້ອຍຕ່າງຫາກ.

☞ ໃນນີ້, ມີໂຮງງານຈຳນວນໜຶ່ງອາດຈະປຸງແຕ່ງ ທັງສອງຂັ້ນພ້ອມກັນ ກໍ່ໃຫ້ຈັດເຂົ້າ I+II. ໃນການຈັດແບ່ງຂັ້ນໂຮງງານຕາມເລກລະຫັດໃໝ່ນີ້ ໃຫ້ຖືເອົາການສ້າງມູນຄ່າເພີ້ມການຜະລິດ ເປັນຜະລິດຕະພັນໄມ້ສຸດທ້າຍ ເປັນຕົ້ນຕໍ.

4/. ດ້ານມາດຕະຖານໂຮງງານປຸງແຕ່ງໄມ້ສຳເລັດຮູບ ຕາມມາດຕາ 6 ແລະ ມາດຕະຖານໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ ແບບຄອບຄົວ ຕາມມາດຕາ 10 ຂອງຂໍ້ຕົກລົງສະບັບໃໝ່ນີ້ ແມ່ນບໍ່ໄດ້ກຳນົດ ເນື້ອທີ່ໂຮງງານ ແລະ ຈຳນວນເຄື່ອງຈັກຢູ່ໃນໂຮງງານ. ແຕ່ໃນນີ້, ຕົ້ນຕໍ ຕ້ອງມີຂະບວນການປຸງແຕ່ງ ແລະ ການສ້າງມູນຄ່າເພີ້ມ ເປັນຫຼັກ, ເພື່ອແນໃສ່ການປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ຮັບປະກັນຄຸນນະພາບ ແລະ ມາດຕະຖານຜະລິດຕະພັນໄມ້. ພ້ອມດຽວກັນນີ້, ບັນດາເຄື່ອງຈັກທີ່ຕິດຕັ້ງຢູ່ໃນໂຮງງານ ຕ້ອງມີເປົ້າໝາຍ ເພື່ອຮັບໃຊ້ໃຫ້ແກ່ຂະບວນການຜະລິດຂອງໂຮງງານເທົ່ານັ້ນ.

5/. ການພິຈາລະນາ ອອກໃບອະນຸຍາດດຳເນີນກິດຈະການໂຮງງານ ສຳລັບໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ ແບບຄອບຄົວ ທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງ ເລກທີ 0719/ອຄ ໃຫ້ປະຕິບັດຕາມມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 1301/ອຄ. ກຳນົດໃບອະນຸຍາດໜຶ່ງປີ (ສາມາດຕໍ່ໄດ້) ແລະ ເກັບຄ່າທຳນຽມໃບອະນຸຍາດ ຕາມກຳລັງແຮງມ້າເຄື່ອງຈັກຕົວຈິງ ຕາມລະບຽບການຂອງກະຊວງການເງິນທີ່ປະກາດໃຊ້ແຕ່ລະໄລຍະ. ໃນນີ້, ບັນດາເອກະສານຕົ້ນຕໍທີ່ຕ້ອງປະກອບ ເພື່ອຂໍອະນຸຍາດດຳເນີນກິດຈະການ ມີຄື:

1). ໃບຄຳຮ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ (ແບບຟອມ ຮ/ງ 1).

2). ສຳເນົາໃບສັນຍາເຊົ່າທີ່ດິນ/ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ.

3). ລາຍການເຄື່ອງຈັກ ແລະ ເຄື່ອງມືຮັບໃຊ້ ຢູ່ໃນໂຮງງານ.

4). ແຜນຜັງສະແດງໃຫ້ເຫັນທີ່ຕັ້ງໂຮງງານ (ໃນຂອບເຂດລັດສະໝີ 500 ແມັດ).

5). ແຜນການເຄື່ອນໄຫວປະຈຳປີຂອງໂຮງງານ (ແບບຟອມ ອ1-ອ7).

**6/. ການດັດສົມໂຮງງານປຸງແຕ່ງໄມ້:**

**6.1. ໂຮງງານທີ່ໄດ້ອອກອະນຸຍາດແລ້ວ**: ໃຫ້ສືບຕໍ່ຊຸກຍູ້ ແລະ ແນະນຳໂຮງງານທີ່ໄດ້ອອກໃບອະນຸຍາດດຳເນີນກິດຈະການໂຮງງານແລ້ວ ເພື່ອປັບປຸງຄືນສ່ວນທີ່ຍັງຄ້າງຄາ, ເປັນຕົ້ນ ດ້ານຄວາມປອດໄພ, ສຸຂະອະນາໄມໂຮງງານ ແລະ ປະຕິບັດຕາມແຜນການຄຸ້ມຄອງສິ່ງແວດລ້ອມໂຮງງານໃຫ້ເຂັ້ມງວດ ຕາມຂໍ້ 13.2 ມາດຕາ 13 ຂອງຂໍ້ຕົກລົງ ເລກທີ 0719/ອຄ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ.

**6.2. ໂຮງງານທີ່ກຳລັງປັບປຸງ**: ໃຫ້ສືບຕໍ່ຕິດຕາມ ແລະ ຊຸກຍູ້ ໃຫ້ໂຮງງານທີ່ຢູ່ໃນບັນຊີຖືກປັບປຸງ ຕາມຈຳນວນໂຮງງານທີ່ພະແນກ ອ.ຄ ແຂວງໄດ້ຢັ້ງຢືນ ແລະ ຮັບຮອງເອົາແລ້ວນັ້ນ. ກໍລະນີໂຮງງານໄດ້ມີການປັບປຸງສຳເລັດ, ໄດ້ຜ່ານການລົງກວດກາ ແລະ ຖືກຕ້ອງ ຄົບຖ້ວນ ຕາມມາດຕະຖານທີ່ກຳນົດໄວ້ໃນຂໍ້ຕົກລົງເລກທີ 0719/ອຄ, ໃຫ້ແນະນຳໂຮງງານປະກອບເອກະສານ ເພື່ອຂໍອະນຸຍາດດຳເນີນກິດຈະການໂຮງງານ ແລະ ພິຈາລະນາອອກໃບອະນຸຍາດໃຫ້ຕາມຂໍ້ຕົກລົງເລກທີ່ 1301/ອຄ ເປັນແຕ່ລະກໍລະນີ ຕາມຂໍ້ 13.3 ມາດຕາ 13 ຂອງຂໍ້ຕົກລົງ ເລກທີ 0719/ອຄ.

ໃນໄລຍະການປັບປຸງ ໂຮງງານຕ້ອງຢຸດເຊົາການເຄື່ອນໄຫວກິດຈະການຊົ່ວຄາວ, ເພື່ອປັບປຸງໂຮງງານໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້. ພາຍຫຼັງປັບປຸງໂຮງງານສຳເລັດ ແລະ ໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ແລ້ວ ຈຶ່ງສາມາດເຄື່ອນໄຫວກິດຈະການໄດ້.

**6.3. ໂຮງງານທີ່ຖືກຢຸດເຊົາ:** ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ທີ່ນອນຢູ່ໃນບັນຊີຖືກຢຸດເຊົາຖາວອນ ຕາມຈຳນວນໂຮງງານທີ່ພະແນກ ອ.ຄ ແຂວງ ໄດ້ຢັ້ງຢືນ ແລະ ຮັບຮອງເອົາແລ້ວ ໃຫ້ຖືວ່າເປັນໂຮງງານ **ຖືກລົບລ້າງຢ່າງຂາດຕົວ.** ໃນກໍລະນີ ໂຮງງານດັ່ງກ່າວຫາກຍັງເຄື່ອນໄຫວກິດຈະການ, ລວມທັງໂຮງງານທີ່ເຄື່ອນໄຫວໂດຍບໍ່ໄດ້ຮັບໃບອະນຸຍາດ ຖືວ່າ ເປັນການລະເມີດ ຕໍ່ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ, ລະເມີດຕໍ່ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

ມອບໃຫ້ພະແນກ ອ.ຄ ແຂວງ, ນະຄອນຫຼວງ ແຈ້ງຕໍ່ພະແນກການທີ່ກ່ຽວຂ້ອງ, ອຳນາດການປົກຄອງ ແລະ ໜ່ວຍສະເພາະກິດຂອງແຂວງ, ນະຄອນຫຼວງ ເພື່ອພິຈາລະນາ ປະຕິບັດມາດຕະການຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ແລະ ກ້າວໄປເຖິງການດຳເນີນຄະດີ ຕາມຂະບວນການຍຸດຕິທຳ.

**6.4.** ໃຫ້ຊຸກຍູ້ ແລະ ແນະນຳ ບັນດາໂຮງງານປຸງແຕ່ງໄມ້ຂັ້ນໜຶ່ງ (ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ເຄິ່ງສຳເລັດຮູບ) ທີ່ດຳເນີນກິດຈະການເລື່ອຍໄມ້ແຕ່ຢ່າງດຽວ, ໃຫ້ປັບປຸງໂຮງງານຂອງຕົນ ໃຫ້ກ້າວຂຶ້ນເປັນໂຮງງານປຸງແຕ່ງໄມ້ຂັ້ນສອງ ເພື່ອສ້າງມູນຄ່າເພີ້ມ ປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ, ໂດຍມີແຜນການປັບປຸງ ແລະ ກຳນົດເວລາຈະແຈ້ງ ຖ້າບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ.

**6.5.** ໃຫ້ກວດກາຄືນ ບັນດາໂຮງງານທີ່ຕັ້ງຢູ່ໃກ້ເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ. ໃນກໍລະນີ ມີໂຮງງານທີ່ຕັ້ງຢູ່ເຂດດັ່ງກ່າວ ໃຫ້ຊຸກຍູ້ ແລະ ແນະນຳ ໂຮງງານຍົກຍ້າຍອອກໄປຕັ້ງຢູ່ໃນເຂດອຸດສາຫະກຳ ຫຼື ສະຖານທີ່ອື່ນ ທີ່ເໝາະສົມ ແລະ ຖືກຕ້ອງຕາມລະບຽບການກ່ຽວຂ້ອງ.

**6.6.** ໃຫ້ຊຸກຍູ້ ແລະ ແນະນຳ ບັນດາໂຮງງານທີ່ໄດ້ຮັບອະນຸຍາດແລ້ວ ໃຫ້ໂຮມຕົວກັນ ຈັດຕັ້ງເປັນກຸ່ມໂຮງງານ ແລະ ເຂົ້າເປັນສະມາຊິກ ຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ ເພື່ອຮ່ວມກັນດຳເນີນກິດຈະການຜະລິດ ແລະ ປຸງແຕ່ງໄມ້ ດ້ວຍການສ້າງມູນຄ່າເພີ້ມ ໃຫ້ເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ມີຄຸນນະພາບ ແລະ ມາດຕະຖານ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ຕາມທິດຂອງລັດຖະບານ.

**7/.** ການຂໍສ້າງຕັ້ງໂຮງງານປຸງແຕ່ງໄມ້ຂຶ້ນໃໝ່ ໃຫ້ປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ 22/9/08 ຄື: ມີແຕ່ລັດຖະບານເທົ່ານັ້ນ ຈຶ່ງມີສິດຕົກລົງໃຫ້ສ້າງຕັ້ງໂຮງງານປຸງແຕ່ງໄມ້ໃໝ່ (ຕາມທິດສົ່ງເສີມໂຮງງານປຸງແຕ່ງໄມ້ທີ່ທັນສະໄໝ) ບົນພື້ນຖານການສະເໜີຂອງແຂວງ ແລະ ໄດ້ຮັບຄວາມເຫັນດີເປັນເອກະພາບຈາກກະຊວງອຸດສາຫະກຳ ແລະການຄ້າ ແລະ ກະຊວງກະສິກຳ ແລະປ່າໄມ້.

**8/.** ໃຫ້ສະຫຼຸບລາຍງານຄືນ ຜົນຂອງການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 0719/ອຄ, ລົງວັນທີ 3/4/09 ແລ້ວສົ່ງມາຍັງກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະໄລຍະ, ເພື່ອສັງລວມລາຍງານຕໍ່ຂັ້ນເທິງໃນໄລຍະຕໍ່ໄປ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຂ້າງເທິງນີ້ ຢ່າງເຂັ້ມງວດດ້ວຍ.

- **<u>ບ່ອນສົ່ງ</u>:**

**ຫົວໜ້າກົມອຸດສາຫະກຳ**

- ທ່ານລັດຖະມົນຕີວ່າການ, ຊ່ວຍວ່າການກະຊວງ ອ.ຄ (ເພື່ອລາຍງານ).
- ຫ້ອງການກະຊວງ ອ.ຄ (ເພື່ອລາຍງານ).
- ບັນດາກົມທີ່ກ່ຽວຂ້ອງ (ເພື່ອຊາບ).
- ສະມາຄົມອຸດສາຫະກຳ ປຸງແຕ່ງໄມ້ (ເພື່ອຕິດຕາມ).

ຫວ່າງ ພົມມະສັກ